ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------------

ສະພາແຫ່ງຊາດ

ຄະນະປະຈຳ

ເລກທີ 039/ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 1 // 05 /2012

# ມະຕິຕົກລົງ
# ຂອງຄະນະປະຈຳສະພາແຫ່ງຊາດ
# ກ່ຽວກັບການຕີຄວາມໝາຍກົດໝາຍ

ອີງຕາມມາດຕາ 56 ຂອງລັດຖະທຳມະນູນ ແຫ່ງ ສປປ ລາວ ແລະ ມາດຕາ 23 (ໃໝ່) ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ກ່ຽວກັບສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ ໃນການຕີຄວາມໝາຍ ແລະ ອະທິບາຍລັດຖະທຳມະນູນ ແລະ ກົດໝາຍຕ່າງໆ;

ອີງຕາມການສະເໜີຂອງອົງການໄອຍະການປະຊາຊົນສູງສຸດ ສະບັບເລກທີ 005/ອອປສ ລົງວັນທີ 18 ຕຸລາ 2011 ແລະ ການສະເໜີຂອງຄະນະກຳມະການແຫ່ງຊາດ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ ສະບັບລົງວັນທີ 19 ຕຸລາ 2011

ຄະນະປະຈຳສະພາແຫ່ງຊາດ ຕົກລົງ

ຕີຄວາມໝາຍກົດໝາຍ ໃນຂົງເຂດຍຸຕິທຳ ດັ່ງນີ້:

## I. <u>ກົດໝາຍວ່າດ້ວຍ ຢາເສບຕິດ</u>

ມາດຕາ 34. ຂອງກາງ

ໃນກໍລະນີທີ່ມີການຮັບສາລະພາບຂອງຜູ້ຖືກຫາ ແຕ່ບໍ່ມີຂອງກາງນັ້ນ ຕ້ອງໄດ້ຊອກຫາພະຍານ, ຫຼັກຖານອື່ນ ໃນຄະດີມາຢັ້ງຢືນ ເພື່ອຕັດສິນ.

ມາດຕາ 36. ການຊັດທອດ

ການຊັດທອດໃສ່ບຸກຄົນໃດໜຶ່ງ ໂດຍບໍ່ມີຂອງກາງ ແຕ່ມີຫຼັກຖານຮັດກຸມ ແລະ ບຸກຄົນນີ້ ປະຕິເສດບໍ່ຮັບຮູ້ ກໍໃຫ້ດຳເນີນຄະດີ ຕາມກົດໝາຍ.

ຕີຄວາມໝາຍ: ກ່ຽວກັບມາດຕາ 34 ວັກ 4 ແລະ ມາດຕາ 36 ວັກ 4 ຂອງກົດໝາຍວ່າດ້ວຍ ຢາເສບຕິດ ແລະມາດຕາ 146 ຂອງກົດໝາຍ ອາຍາ ນັ້ນ ແມ່ນບໍ່ໃຫ້ຜູ້ກະທຳຜິດຫຼຸດພົ້ນຈາກການລົງໂທດ ແລະ ຕ້ອງລົງໂທດຕາມມາດຕາ 146 ຂອງກົດໝາຍອາຍາ ໂດຍອີງໃສ່ໂທດຕ່ຳສຸດ ຂອງວັກທີ່ກ່ຽວຂ້ອງ ເຊັ່ນ: ບຸກຄົນຜູ້ໃດຫາກຜະລິດ, ປຸງແຕ່ງ ຫຼື ມີໄວ້ໃນຄອບຄອງ, ຄ້າຂາຍ, ຈຳໜ່າຍ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ ຫຼື ນຳຢາອີ, ຢາບ້າ ຫຼື ວັດຖຸອອກລິດຕໍ່ຈິດປະສາດອື່ນໆ ຜ່ານ ສປປ ລາວ ຕ່ຳກວ່າໜຶ່ງຮ້ອຍກຣາມ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 100.000.000 ກີບ ແລະ ຈະຖືກຮິບຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 34 ຂອງກົດໝາຍອາຍາ. ໃນນີ້ຕ້ອງລົງໂທດ 5 ປີ ແລະ ຈະຖືກປັບໃໝ 10.000.000 ກີບ ແລະ ຈະຖືກຮິບຊັບ ຕາມມາດຕາດັ່ງກ່າວ ເຖິງວ່າຜູ້ຖືກຫາ ຫຼື ຈຳເລີຍ ຈະຮັບສາລະພາບວ່າຢາເສບຕິດມີໜ້ອຍຫຼາຍປານໃດກໍຕາມ.

## II. ກົດໝາຍວ່າດ້ວຍ ການສືບທອດມູນມໍລະດົກ

ມາດຕາ 19. ມູນມໍລະດົກຂອງພິກຂຸ, ສາມະເນນ ຫຼື ນັກບວດອື່ນ

ພິກຂຸ, ສາມະເນນ ຫຼື ນັກບວດອື່ນ ທີ່ມີຊັບກ່ອນບວດ ຫຼື ມີໃນໄລຍະບວດນັ້ນ ແມ່ນມີສິດມອບຊັບ, ຍົກຊັບ ຫຼື ເຮັດພິໄນກຳ ໃຫ້ບຸກຄົນ ຫຼື ການຈັດຕັ້ງອື່ນ ຕາມລະບຽບກົດໝາຍ ລວມທັງມີສິດໃຫ້ຜູ້ອື່ນສືບທອດມູນມໍລະດົກຂອງຕົນ ຕາມກົດໝາຍ.

ໃນກໍລະນີທີ່ພິກຂຸ, ສາມະເນນ ຫຼື ນັກບວດອື່ນ ຫາກໄດ້ເສຍຊີວິດ ໂດຍບໍ່ມີຜູ້ສືບທອດມູນມໍລະດົກ ຫຼື ບໍ່ໄດ້ມອບຊັບໃດໜຶ່ງໃຫ້ບຸກຄົນ, ການຈັດຕັ້ງ ຫຼື ມູນນິທິໃດໜຶ່ງແລ້ວ ຊັບທັງໝົດນັ້ນ ກໍຈະຕົກເປັນຂອງວັດ ຫຼື ສາສະໜາສະຖານ ບ່ອນຜູ້ກ່ຽວຢູ່ປະຈຳ.

ຕີຄວາມໝາຍ: " ບ່ອນຢູ່ປະຈຳ "

ບ່ອນຢູ່ປະຈຳ ໝາຍເຖິງ ບ່ອນຢູ່ຖາວອນ ສຸດທ້າຍ ຕາມໜັງສືອະນຸຍາດຂອງ ພິກຂຸ, ສາມະເນນ ຫຼື ນັກບວດອື່ນ ທີ່ສອດຄ່ອງກັບກົດລະບຽບສະເພາະຂອງອົງການພຸດທະສາສະໜາ ສຳພັນລາວ ຫຼື ສາສະໜາອື່ນ.

ມາດຕາ 40. ອາຍຸຄວາມໃນການຮ້ອງຟ້ອງເອົາມູນມໍລະດົກ

ການຮ້ອງຟ້ອງເອົາມູນມໍລະດົກ ສາມາດເຮັດຂຶ້ນໄດ້ ພາຍໃນກຳນົດເວລາສາມປີ ນັບແຕ່ວັນເຈົ້າມູນມໍລະດົກໄດ້ເສຍຊີວິດເປັນຕົ້ນໄປ. ຖ້າຫາກກາຍກຳນົດເວລາດັ່ງກ່າວ ສິດໃນການຮ້ອງຟ້ອງຈະຕົກໄປ ເວັ້ນ

ເສັຍແຕ່ໃນກໍລະນີ ຜູ້ສືບທອດມູນມໍຣະດົກນັ້ນ ຫາກມີອາຍຸບໍ່ເຖິງ ສິບແປດ ປີ ພາຍຫຼັງ ເຈົ້າມູນມໍຣະດົກ ໄດ້ເສັຍຊີວິດ ຫຼື ມີເຫດຜົນອື່ນພຽງພໍ.

ຕີຄວາມໝາຍ: "ມີເຫດຜົນອື່ນພຽງພໍ " ໝາຍເຖິງ ກໍລະນີຜູ້ໄປປະຕິບັດໜ້າທີ່ຢູ່ ພາຍໃນ ຫຼື ຕ່າງປະເທດ ຊຶ່ງບໍ່ສາມາດມາທວງເອົາ ຫຼື ທຳການຮ້ອງຟ້ອງ, ກໍລະນີຜູ້ຖືກສານຕັດສິນເປັນຜູ້ຫາຍສາບສູນ ຫຼື ເປັນຜູ້ເສັຍຊີວິດ, ກໍລະນີບຸກຄົນ ຫຼື ຜູ້ຖືກປະຕິບັດໂທດຢູ່ຄ້າຍຄຸມຂັງພາຍໃນ ຫຼື ຕ່າງປະເທດ ທີ່ບໍ່ຮູ້ວ່າເຈົ້າມູນມໍຣະດົກເສັຍຊີວິດ, ກໍລະນີມີການຕົກລົງເຫັນດີບໍ່ທັນແບ່ງປັນລະຫວ່າງຜູ້ສືບທອດດ້ວຍກັນ, ກໍລະນີບຸກຄົນເປັນບ້າເສັຍຈິດ ໂດຍບໍ່ມີການແຕ່ງຕັ້ງຜູ້ປົກຄອງ ເມື່ອບຸກຄົນດັ່ງກ່າວນັ້ນ ມີສະຕິສຳປະຊັນຍະຄືນ.

ຕີຄວາມໝາຍ: " ການທວງ " ໂດຍທົ່ວໄປແລ້ວອາຍຸຄວາມໃນການຮ້ອງຟ້ອງທາງແພ່ງ ແມ່ນມີກຳນົດ ສາມ ປີ ນັບແຕ່ມື້ສິ້ນສຸດສັນຍາເປັນຕົ້ນໄປ ຫຼື ນັບແຕ່ມື້ເຈົ້າມູນມໍຣະດົກເສັຍຊີວິດເປັນຕົ້ນໄປ (ຖ້າຫາກແມ່ນການສືບທອດມູນມໍຣະດົກ) ຖ້າຫາກມີການທວງ ກໍໃຫ້ເລີ່ມນັບແຕ່ມື້ທວງເທື່ອສຸດທ້າຍຢ່າງເປັນລາຍລັກອັກສອນຕໍ່ອົງການປົກຄອງບ້ານ, ຂະແໜງການ, ອົງການຕ່າງໆ ເປັນຕົ້ນໄປເຖິງວ່າບໍ່ມີການຮ້ອງຟ້ອງຕໍ່ສານກໍຕາມ.

## III. ກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ

ມາດຕາ 117 ການຂໍຮື້ຟື້ນຄະດີ

ຕີຄວາມໝາຍ: " ກຳນົດເວລາຂໍຮື້ຟື້ນຄະດີ "

ກຳນົດເວລາຂໍຮື້ຟື້ນຄະດີ ຕາມຫຼັກການແລ້ວແມ່ນມີກຳນົດເວລາໜຶ່ງປີ ພາຍຫຼັງທີ່ມີຄຳຕັດສິນໃຊ້ໄດ້ຢ່າງເດັດຂາດແລ້ວ ແຕ່ຄູ່ຄວາມທີ່ບໍ່ພໍໃຈ ຍັງໄດ້ຍື່ນຄຳຮ້ອງໄປຫາ ສຳນັກງານປະທານປະເທດ ຫຼື ຫ້ອງວ່າການລັດຖະບານ ຫຼື ຫ້ອງວ່າການສູນກາງພັກ ຫຼື ອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ ຫຼື ຫ້ອງວ່າການສະພາແຫ່ງຊາດນັ້ນ ກຳນົດເວລາຂໍຮື້ຟື້ນຄະດີໄປຫາອົງການໄອຍະການປະຊາຊົນສູງສຸດ ກໍຍັງແມ່ນໜຶ່ງປີ ໂດຍໃຫ້ນັບແຕ່ມື້ຍື່ນຄຳຮ້ອງຂໍສຸດທ້າຍໄປຫາອົງການດັ່ງກ່າວເປັນຕົ້ນໄປ.

ໃນກໍລະນີມີຄຳສັ່ງປິດສຳນວນຄະດີ ແຕ່ອາຍຸຄວາມໃນການຮ້ອງຂໍຮື້ຟື້ນຄະດີຍັງບໍ່ທັນໝົດນັ້ນ ເມື່ອມີຄຳຮ້ອງຂໍຮື້ຟື້ນ ກໍໃຫ້ນຳມາພິຈາລະນາ ຕາມລະບຽບກົດໝາຍ.

ຕີຄວາມໝາຍ: " ການຖອນຄຳຮ້ອງຟ້ອງ"

ການຖອນຄຳຮ້ອງຟ້ອງ ຊຶ່ງສານຈະບໍ່ນຳມາພິຈາລະນານັ້ນ ໝາຍເຖິງ ການຖອນດ້ວຍຄວາມສະໝັກໃຈຂອງຜູ້ຮ້ອງຟ້ອງວ່າ ຈະບໍ່ເອົາເລື່ອງກັບຈຳເລີຍອີກ ກ່ຽວກັບບັນຫາທີ່ຮ້ອງຟ້ອງນັ້ນ ເຊັ່ນ ມີການຕົກລົງ ຫຼື ການໄກ່ເກ່ຍກັນແລ້ວ.

## IV. ກົດໝາຍວ່າດ້ວຍ ຄອບຄົວ

ມາດຕາ 7/1 ( ໃໝ່ ). ຄ່າດອງຄ້າງ

ໃນກໍລະນີທີ່ມີການຢ່າຮ້າງກັນ ຄ່າດອງທີ່ຝ່າຍຊາຍຍັງບໍ່ທັນມອບໃຫ້ຝ່າຍຍິງຄົບຖ້ວນ ໃນເວລາແຕ່ງດອງເອົາກັນເປັນຜົວເມຍນັ້ນ ຕ້ອງນໍາມາປະຕິບັດ ຖ້າຫາກຝ່າຍຊາຍເປັນຜູ້ມີຄວາມຜິດ.

ໃນກໍລະນີທີ່ ຝ່າຍຍິງຫາກເປັນຜູ້ມີຄວາມຜິດ ຄ່າດອງຄ້າງນັ້ນ ກໍຈະຕົກໄປ.

<u>ຕີຄວາມໝາຍ:</u> ຄວາມຜິດຂອງຝ່າຍຊາຍທີ່ຕ້ອງໄດ້ຈ່າຍຄ່າດອງຄ້າງ

- ໃນກໍລະນີ ເມັຍຮ້ອງຟ້ອງຢ່າຮ້າງຜົວ ຊຶ່ງຜົວຈະໄດ້ຈ່າຍຄ່າດອງຄ້າງໃຫ້ເມັຍນັ້ນ ແມ່ນຄວາມຜິດທີ່ໄດ້ກໍານົດໄວ້ໃນ ມາດຕາ 20 ຂໍ້ 1, 2, 3, 4 ແລະ 10 ຂອງກົດໝາຍວ່າດ້ວຍ ຄອບຄົວ ຄື:
  1. ທໍານິດສະຈານ;
  2. ໃຊ້ຄວາມຮຸນແຮງ ຫຼື ປ້ອຍດ່າດ້ວຍຄວາມຫຍາບຊ້າຕໍ່ກັນ ຫຼື ຕໍ່ພໍ່ແມ່ ແລະ ຍາດພີ່ນ້ອງ ຫຼື ມີການປະພຶດທີ່ບໍ່ເໝາະສົມຢ່າງຮ້າຍແຮງ ເຊັ່ນ ຕິດເຫຼົ້າ, ຕິດຢາເສບຕິດຢ່າງໜັກໜ່ວງ ຫຼື ຫຼິ້ນການພະນັນເປັນອາຈິນ, ຫຼິ້ນກິນຟຸມເຟືອຍ;
  3. ໜີໄປໂດຍບໍ່ຄອບກັນ ແລະ ບໍ່ໄດ້ສົ່ງຂ່າວຄາວ ຫຼື ສົ່ງຊັບມາລ້ຽງຄອບຄົວ ເປັນເວລາສາມປີ ຂຶ້ນໄປ;
  4. ຜົວໄປບວດເປັນພິກຂຸ, ສາມະເນນ ຫຼື ພໍ່ຂາວ ( ຫຼື ເມັຍໄປບວດເປັນແມ່ຂາວ ) ເກີນກວ່າ ສາມປີ ໂດຍບໍ່ມີຄວາມເຫັນດີນໍາກັນ;
  10. ບໍ່ສາມາດດໍາລົງຊີວິດເປັນຜົວເມັຍກັນຕໍ່ໄປໄດ້ ຍ້ອນສາເຫດຕ່າງໆເຊັ່ນ ບໍ່ສັດຊື່ຕໍ່ກັນ, ທໍລະມານຈິດໃຈກັນ.
- ໃນກໍລະນີ ຜົວຮ້ອງຟ້ອງຢ່າຮ້າງເມັຍ ຊຶ່ງຜົວຈະໄດ້ຈ່າຍຄ່າດອງຄ້າງໃຫ້ເມັຍນັ້ນ ແມ່ນກໍລະນີທີ່ໄດ້ກໍານົດໄວ້ໃນ ມາດຕາ 20 ຂໍ້ 7, 8 ແລະ 9 ຂອງ ກົດໝາຍວ່າດ້ວຍ ຄອບຄົວ ເຊັ່ນ
  7. ເປັນພະຍາດ ຊຶ່ງເປັນອັນຕະລາຍຢ່າງຮ້າຍແຮງ ທີ່ບໍ່ສາມາດຈະຢູ່ນໍາກັນໄດ້;
  8. ເປັນຄົນບ້າເສັຍຈິດ ຈົນບໍ່ສາມາດຈະຢູ່ນໍາກັນໄດ້;
  9. ບໍ່ສາມາດຮ່ວມປະເວນີທາງເພດ.

ຄະນະປະຈໍາສະພາແຫ່ງຊາດ

ປະທານ

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້